**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ　　　　　　　　　　　　　　　　　　　　ເລກທີ 1476/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2026

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບລົງລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 350/ຫສນຍ, ລົງວັນທີ 18 ມີນາ 2026;
- ອີງຕາມ ແຈ້ງການ ຂອງຫ້ອງການກະຊວງການເງິນ ສະບັບເລກທີ 2400/ຫກ, ລົງວັນທີ 24 ມິຖຸນາ 2026;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 1999/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 12 ສິງຫາ 2026;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟທຸກຊະນິດ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:

1. ປັບລົງລາຄານ້ຳມັນເຊື້ອໄຟ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 650 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບລົງ 600 ກີບ ແລະ ນ້ຳມັນກາຊວນ ປັບລົງ 330 ກີບ/ລິດ.

   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງ:

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ນ້ຳມັນແອັດຊັງພິເສດ | 37,430 | 36,780 | -650 | 1.74 | |
| 2 | ນ້ຳມັນແອັດຊັງທຳມະດາ | 31,520 | 30,920 | -600 | 1.90 | |
| 3 | ນ້ຳມັນກາຊວນ | 31,290 | 30,960 | -330 | 1.05 | |

SVX

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດວັນທີ 13 ສິງຫາ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.

3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1475/ຄພນ, ລົງວັນທີ 12 ສິງຫາ 2026 ຈົນກວ່າຈະມີ ການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍ ຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ ຂອງປ້ຳນ້ຳມັນເຊື້ອໄຟ ໃນຂອບເຂດຄວາມຮັບຜິດ ຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1426/ກຄພນ, ລົງວັນທີ 05 ສິງຫາ 2026.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າ...

ສັນຕິສຸກ ພູນສະຫວັດ

<u>ບ່ອນສົ່ງ:</u>
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຄະນະເລຂາທິການ, ສະພາແຫ່ງຊາດ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ (ເພື່ອຕິດຕາມ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 13 ສິງຫາ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 36,780 | 30,920 | 30,960 |
| 2 | ແຂວງຜົ້ງສາລີ | 37,770 | 31,910 | 31,950 |
| 3 | ແຂວງຫຼວງນ້ຳທາ | 37,270 | 31,420 | 31,450 |
| 4 | ແຂວງອຸດົມໄຊ | 37,450 | 31,590 | 31,630 |
| 5 | ແຂວງບໍ່ແກ້ວ | 36,880 | 31,020 | 31,060 |
| 6 | ແຂວງຫຼວງພະບາງ | 37,290 | 31,430 | 31,470 |
| 7 | ແຂວງໄຊຍະບູລີ | 37,100 | 31,250 | 31,290 |
| 8 | ແຂວງຫົວພັນ | 37,290 | 31,430 | 31,470 |
| 9 | ແຂວງຊຽງຂວາງ | 36,980 | 31,110 | 31,150 |
| 10 | ແຂວງວຽງຈັນ | 36,780 | 30,920 | 30,960 |
| 11 | ແຂວງບໍລິຄຳໄຊ | 36,830 | 30,970 | 31,010 |
| 12 | ແຂວງຄຳມ່ວນ | 36,810 | 30,950 | 30,990 |
| 13 | ແຂວງສະຫວັນນະເຂດ | 36,810 | 30,950 | 30,990 |
| 14 | ແຂວງສາລະວັນ | 37,060 | 31,210 | 31,250 |
| 15 | ແຂວງຈຳປາສັກ | 36,840 | 30,980 | 31,020 |
| 16 | ແຂວງເຊກອງ | 37,060 | 31,200 | 31,250 |
| 17 | ແຂວງອັດຕະປື | 37,110 | 31,250 | 31,290 |
| 18 | ແຂວງໄຊສົມບູນ | 37,200 | 31,340 | 31,390 |

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ນະຄອນຫຼວງວຽງຈັນ, 12 ສິງຫາ 2026